ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການ

ເລກທີ 2342 /ຫກຊ
ນະຄອນຫຼວງວຽງຈັນ, ວັນທີ 20 SEP 2016

# ແຈ້ງການ

**ເຖິງ:** ບັນດາຫ້າງຮ້ານ ແລະ ຕົວແທນຈຳໜ່າຍ ໂທລະສັບມືຖື ໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຍຸດຕິການນຳເຂົ້າ, ຈຳໜ່າຍ ແລະ ເກັບກູ້ຄືນໂທລະສັບມືຖືສມາດໂຟນ ຍີ່ຫໍ້ Samsung Galaxy Note 7 ໃນ ສປປລາວ.

- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 654/ປທສ, ລົງວັນທີ 28 ມີນາ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງ ປທສ.

ພາຍຫຼັງໄດ້ມີການເປີດຕົວ ແລະ ຈຳໜ່າຍໂທລະສັບມືຖືສະມາດໂຟນ ຍີ່ຫໍ້ Samsung Galaxy Note 7 ອອກສູ່ສັງຄົມໄດ້ນຳໃຊ້ມາຊ່ວງໄລຍະໜຶ່ງ, ເຫັນວ່າໂທລະສັບລຸ້ນນີ້ແມ່ນເກີດມີບັນຫາທາງດ້ານເຕັກນິກ (ແບດຕະລີ້ລະເບີດ ແລະ ໄຟໄໝ້) ຊຶ່ງເຮັດໃຫ້ເປັນອັນຕະລາຍໃຫ້ແກ່ຜູ້ທີ່ນຳໃຊ້ໂທລະສັບດັ່ງກ່າວ, ດັ່ງນັ້ນ, ເພື່ອຫຼີກລ້ຽງອັນຕະລາຍທີ່ຈະເກີດຂຶ້ນກັບຊີວິດ ແລະ ຊັບສິນ ຂອງຜູ້ນຳໃຊ້, ຫ້ອງການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຈ້ງມາຍັງບັນດາຫ້າງຮ້ານ ແລະ ຕົວແທນຈຳໜ່າຍໂທລະສັບມືຖື ໃນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈັດຕັ້ງປະຕິບັດເພື່ອຍຸດຕິການນຳເຂົ້າ, ຈຳໜ່າຍ ແລະ ດຳເນີນການເກັບກູ້ຄືນຈາກລູກຄ້າໂດຍດ່ວນ ໂທລະສັບມືຖືສະມາດໂຟນ ຍີ່ຫໍ້ Samsung Galaxy Note 7 ທີ່ໄດ້ຈຳໜ່າຍອອກສູ່ສັງຄົມ ໃນ ສປປ ລາວ, ພ້ອມທັງສົ່ງເງິນຄືນແກ່ລູກຄ້າໃຫ້ຄົບຖ້ວນຕາມຈຳນວນທີ່ໄດ້ຈ່າຍຊື້ ຢ່າງບໍ່ມີເງື່ອນໄຂໃດໆທັງສິ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ
ຫ້ອງການ

ບຸນສະເຫຼີມໄຊ ເຄນນາວົງ



ຖະໜົນລ້ານຊ້າງ 01000 ນະຄອນຫຼວງວຽງຈັນ ສປປ ລາວ ໂທ: (+856-21) 215877; ແຟັກ: (+856-21) 219587
Email: laoict@mpt.gov.la